ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ: 916 /ພກພ
ນະຄອນຫຼວງວຽງຈັນ, ວັນທີ: 05 SEP 2018

ຮຽນ: ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,

ເລື່ອງ: ຂໍເລື່ອນການເປີດເຜີຍບົດລາຍງານຜົນການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນ ປີ 2018 ຄັ້ງທີ 2

- ອີງຕາມ: ລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ເລກທີ... 007/ຄຄຊ....., ລົງວັນທີ 03 ເມສາ 2014.

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຂໍເລື່ອນການເປີດເຜີຍບົດລາຍງານຜົນການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນ ປະຈຳ 6 ເດືອນຕົ້ນ ປີ 2018 ອອກໄປອີກ. ເຫດຜົນທີ່ຂໍເລື່ອນການເປີດເຜີຍເນື່ອງຈາກບໍລິສັດ ພຣາຍສ໌ ວໍເຕີ້ເຮົ້າສ໌ ກຸບເປີ໌ (ລາວ) ຈຳກັດຜູ້ດຽວ ທີ່ເຮັດໜ້າທີ່ເປັນບໍລິສັດກວດສອບປະຈຳປີ 2018 ຍັງບໍ່ມີຄຳຕອບວ່າຈະສົ່ງບົດລາຍງານໃຫ້ພວກເຮົາໄດ້ມື້ໃດ. ອີງຕາມການໃຫ້ເຫດຜົນຂອງບໍລິສັດ ພຣາຍສ໌ ວໍເຕີ້ເຮົ້າສ໌ ກຸບເປີ໌ (ລາວ) ຈຳກັດຜູ້ດຽວ ວ່າຍັງລໍຖ້າຄຳຕອບຈາກ Partner ຜູ້ທີ 2 ຢູ່ PWC ປະເທດໄທ, ສະນັ້ນຈຶ່ງເຮັດໃຫ້ ພກພ ບໍ່ສາມາດເປີດເຜີຍບົດລາຍງານຜົນການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນ ປີ 2018 ໄດ້ຕາມລະບຽບການ.

ດັ່ງນັ້ນ ຈຶ່ງຖືເປັນກຽດຮຽນມາຍັງທ່ານເພື່ອພິຈາລະນາ ຕາມທີ່ທ່ານເຫັນວ່າສົມຄວນ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ສີທາ ພິມມະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ໂທລະສັບ/ແຟັກ: +856 21 265394., E-mail: info@pcdlao.com; website: www.pcdlao.com